ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມສະຫຼຸບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະຈຳປີ 2024




ໃນຕອນເຊົ້າຂອງວັນທີ 14 ມີນາ 2025 ທີ່ ຫ້ອງປະຊຸມ ສະຖາບັນການທະນາຄານ. ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (ກຄສບ), ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບ ສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສງລ) ແລະ ອົງການສະຫະພັນສະຫະກອນ ໄຣໄຟເຊັນ ແຫ່ງ ສ. ເຢຍລະມັນ (DGRV) ໄດ້ເປີດກອງປະຊຸມ ສະຫຼຸບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ປະຈຳປີ 2024, ໂດຍການໃຫ້ກຽດເປັນປະທານຂອງທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ, ມີບັນດາຄະນະກົມພາຍໃນ ທຫລ, ຄະນະສາຂາ ທຫລ ປະຈຳພາກ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມທັງໝົດ 40 ທ່ານ.

ທ່ານ ວິສອນ ໄຊສີງຄາມ ຫົວໜ້າ ກຄສບ ໄດ້ສະເໜີບົດສະຫຼຸບລາຍງານການເຄື່ອນໄຫວວຽກງານ ສສງ ປະຈຳປີ 2024 ແລະ ຊຶ່ງໄດ້ຍົກໃຫ້ເຫັນຜົນສຳເລັດອັນພົ້ນເດັ່ນ ເປັນຕົ້ນແມ່ນ: ກຄສບ ໄດ້ເປັນເຈົ້າການປະຕິບັດບົດບາດເສນາທິການຄຸ້ມຄອງລັດໃນຂົງເຂດສະຖາບັນການເງິນທີ່ບໍ່ແມ່ນທະນາຄານຕາມສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ຊຶ່ງສາມາດຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານທັງ 05 ຮູບແບບ ແລະ ໜຶ່ງໃນຮູບແບບນັ້ນກໍ່ຄື ສສງ ໃຫ້ມີຄວາມໝັ້ນຄົງ, ປອດໄພ, ຊຸກຍູ້ການແຂ່ງຂັນທີ່ໂປ່ງໃສ, ຖືກຕ້ອງຕາມນິຕິກຳ ແລະ ກົດໝາຍ ເຮັດໃຫ້ໄດ້ຮັບການພັດທະນາຢ່າງຕັ້ງໜ້າ ປະກອບສ່ວນຊ່ວຍຫຼຸດຜ່ອນຄວາມທຸກຍາກ ແລະ ບັນຫາການປ່ອຍກູ້ນອກລະບົບດ້ວຍອັດຕາດອກເບ້ຍສູງ ແລະ ປະກອບສ່ວນວຽກງານຊຸກຍູ້, ສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນຂອງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດຕາມແນວທາງນະໂຍບາຍຂອງພັກ ແລະ ລັດ. ຮອດປີ 2024, ສະຖິຕິ ສສງ ທົ່ວປະເທດມີທັງໝົດ 35 ແຫ່ງ, ມີທີ່ຕັ້ງສຳນັກງານໃຫ້ບໍລິການຢູ່ 13 ແຂວງ, 27 ເມືອງ, 35 ບ້ານ, ໃນນັ້ນ ເຂດການຄຸ້ມຄອງຂອງ ກຄສບ ຈຳນວນ 03 ແຫ່ງ ແລະ ສາຂາ ທຫລ ປະຈຳພາກຈຳນວນ 32 ແຫ່ງ. ສິນເຊື່ອສ່ວນໃຫຍ່ທີ່ ສສງ ໄດ້ສະໜອງອັນດັບໜຶ່ງແມ່ນ ຂະແໜງກະສິກຳ-ປ່າໄມ້ ກວມເອົາ 37.25%, ຖັດມາແມ່ນ ຄ້າຂາຍ ແລະ ການຄ້າ ກວມເອົາ 19.93%; ການບໍລິການ ກວມເອົາ 17.50%; ແລະ ປະເພດອື່ນໆ 25.33%. ຄຽງຄູ່ກັບຜົນສຳເລັດ, ກຄສບ ແລະ ສສງ ຍັງມີບັນຫາ-ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ແກ້

ໄຂ ເຊັ່ນ: ການສ້າງ ແລະ ປັບປຸງນິຕິກຳຍັງມີລັກສະນະຊັກຊ້າ ເນື່ອງຈາກຕ້ອງໄດ້ຊອກຫາຂໍ້ມູນ ແລະ ບົດຮຽນຂອງ ຕ່າງປະເທດ ແລະ ບັນຫາອື່ນໆ. ພ້ອມກັນນີ້, ຍັງໄດ້ກຳນົດທິດທາງແຜນການເຄື່ອນໄຫວ ໃນປີ 2025 ໃນວຽກງານດັ່ງກ່າວຕື່ມອີກ.



ນອກຈາກນີ້, ກອງປະຊຸມ ຍັງໄດ້ຮັບຟັງການລາຍງານກ່ຽວກັບສິ່ງທ້າທາຍໃນວຽກງານຄຸ້ມຄອງ ສສງ ຈາກ ຄະນະສາຂາ ທຫລ ປະຈຳພາກ ແລະ ໄດ້ຮັບຟັງການນຳສະເໜີ ແລະ ສົນທະນາແລກປ່ຽນໃນຫົວຂໍ້ຕ່າງໆ ກັບຜູ້ຕາງໜ້າຈາກ ສສງ ແຕ່ລະແຂວງທົ່ວປະເທດ.

ໃນຕອນທ້າຍຂອງກອງປະຊຸມ, ທ່ານ ຮອງຜູ້ວ່າການ ທຫລ ຍັງໄດ້ໃຫ້ກຽດໂອ້ລົມມີຄຳເຫັນຕໍ່ຜົນງານການເຄື່ອນໄຫວວຽກງານ ຄຸ້ມຄອງ ສສງ ໃນໄລຍະປີ 2024 ແລະ ໃຫ້ທິດຊີ້ນຳຕໍ່ທິດທາງແຜນການໃນຕໍ່ໜ້າ, ພ້ອມທັງເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນ ເພື່ອເຮັດໃຫ້ວຽກງານການຄຸ້ມຄອງ ສສງ ໄດ້ຮັບຜົນສຳເລັດຕາມຄາດ ໝາຍທີ່ວາງໄວ້ທຸກປະການ.



ກອງປະຊຸມໄດ້ດຳເນີນໄປເປັນເວລາ 1 ວັນເຕັມ ດ້ວຍບັນຍາກາດອັນຟົດຟື້ນ, ຜູ້ເຂົ້າຮ່ວມໄດ້ມີການສະເໜີ ແລະ ປະກອບຄຳ ເຫັນຕໍ່ແຕ່ລະເນື້ອໃນຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ,**

**ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ.**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ